ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ 19 ສາຂາ ແລະ ຫຼາຍກວ່າ **70** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນຫຼາຍຕຳແໜ່ງປະກອບໃຫ້ບັນດາພະແນກການ ແລະ ສາຂາທົ່ວປະເທດ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

## I. ທຄຕລ ຕ້ອງການພະນັກງານ ເພື່ອປະກອບໃຫ້ ພະແນກບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດ ຈຳນວນ 01 ຕຳແໜ່ງ

❖ ຕຳແໜ່ງງານ: ວິຊາການຮັບຜິດຊອບວຽກງານຜະລິດຕະພັນ **BCOME**

❖ **ໜ້າທີ່ຮັບຜິດຊອບ:**

✓ ຄົ້ນຄວ້າ, ສັງລວມ ແລະ ວິເຄາະກ່ຽວກັບປັດໄຈທີ່ມີຜົນກະທົບຕໍ່ຜະລິດຕະພັນ, ຕົວແທນ ແລະ ສ່ວນແບ່ງການຕະຫຼາດຂອງຜະລິດຕະພັນ **BCOME** ເປັນປະຈຳເດືອນ, ໄຕມາດ ແລະ ເປັນປີ.

✓ ຄົ້ນຄວ້າວາງແຜນກຳນົດນະໂຍບາຍ, ກົນລະຍຸດດ້ານການຕະຫຼາດ ແລະ ແຜນປັບປຸງຜະລິດຕະພັນ **BCOME** ແລະ ຕົວແທນ **BCOME** ເພື່ອໃຫ້ວຽກງານດຳເນີນໄປໄດ້ດ້ວຍດີ.

✓ ຮັບຜິດຊອບວຽກງານສຳຫຼວດ ແລະ ຕິດຕາມການເຄື່ອນໄຫວຕົວແທນໃນແຕ່ລະໄຕມາດ ພາຍໃນນະຄອນຫຼວງວຽງຈັນ.

✓ ຮັບຜິດຊອບວຽກງານປະຊາສຳພັນລູກຄ້າ ແລະ ຕົວແທນ.

✓ ວຽກງານສະໜັບສະໜູນ ແລະ ຄຸ້ມຄອງຕົວແທນດ້ານລະບົບ **BCOME** ແລະ ແກ້ໄຂບັນຫາລູກຄ້າ ແລະ ຕົວແທນ.

✓ ປະສານງານ ແລະ ເຮັດວຽກຮ່ວມກັບສາຂາ ແລະ ພາກສ່ວນພາຍນອກເຊັ່ນ: ອົງການ UNCDF.

❖ **ເງື່ອນໄຂຜູ້ສະໝັກ:** ເພດ: **ຊາຍ** ແລະ ມີອາຍຸລະຫວ່າງ **22 – 30** ປີ.

✓ ມີໃບປະກາດຈົບປະລິນຍາຕີຂຶ້ນໄປ ດ້ານບໍລິຫານຈັດການ, ເສດຖະສາດ, ບໍລິຫານທຸລະກິດ, ການຕະຫຼາດ, ການຄ້າ ຫຼື ສາຂາທີ່ກ່ຽວຂ້ອງ ຈາກພາຍໃນ ຫຼື ຕ່າງປະເທດ ທີ່ມີຄະແນນ CGPA ໂດຍສະເລ່ຍ **2.70** ຂຶ້ນໄປ.

✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ.

✓ ມັກໃນການຄົ້ນຄວ້າ, ວິເຄາະບັນຫາ ຖ້າມີປະສົບການໃນການເຮັດບົດວິໄຈ ຫຼື ບົດວິເຄາະກ່ຽວກັບຜະລິດຕະພັນໃດໜຶ່ງ ຫຼື ຂຶ້ນແຜນບໍລິຫານຈັດການ, ລິງໂຄສະນາປະຊາສຳພັນ, ວິເຄາະບັນຫາ ແລະ ປັດໄຈທີ່ມີຜົນກະທົບຕໍ່ຜະລິດຕະພັນ ແລະ ບໍລິການຍິ່ງເປັນການດີ.

✓ ມີຄວາມຮູ້ເລື່ອງຜະລິດຕະພັນຂອງ ທຄຕລ ເປັນຢ່າງດີ ແລະ ສາມາດເຮັດວຽກໃນທ້ອງຖິ່ນເຂດທຸລະກັນດານໄດ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



## II. ຄຸນລັກສະນະຜູ້ສະໝັກເຮັດວຽກກັບ ທຄຕລ:

- ✓ ຊື່ສັດບໍລິສຸດ, ມະນຸດສຳພັນດີ.
- ✓ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະສູງ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✓ ມີບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ.
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນໄດ້ດີ.

## III. ວິທີສະໝັກວຽກ:

ຜູ້ທີ່ມີເງື່ອນໄຂຄົບຖ້ວນຕາມການປະກາດ ແລະ ມີຄວາມສົນໃຈທີ່ຈະສະໝັກວຽກໃນຕຳແໜ່ງດັ່ງກ່າວ ໃຫ້ເອົາໃຈໃສ່ປະຕິບັດຕາມຂັ້ນຕອນດັ່ງນີ້:

1) ກວດສອບເງື່ອນໄຂຕົນເອງ ກັບ ເງື່ອນໄຂຕຳແໜ່ງງານວ່າຕົນເອງຖືກຕາມເງື່ອນໄຂທີ່ລະບຸແລ້ວ ຫຼື ບໍ່.
2) ດາວໂຫຼດຟອມສະໝັກວຽກໄດ້ທີ່ເວັບໄຊສ໌ ຂອງ ທຄຕລ www.bcel.com.la ເຂົ້າໄປທີ່ສະໝັກງານ>ດາວໂຫຼດຟອມສະໝັກວຽກ. **ໝາຍເຫດ: ຟອມສະໝັກງານຕ້ອງ ດາວໂຫຼດຈາກເວັບໄຊສ໌ ເທົ່ານັ້ນ ຈະບໍ່ມີການຂາຍ ຫຼື ແຈກຟອມຢູ່ ທຄຕລ.**
3) ຕື່ມຂໍ້ມູນຟອມສະໝັກທີ່ດາວໂຫຼດ ແລະ ປະກອບເອກະສານໃຫ້ຄົບຖ້ວນດັ່ງນີ້:
   - ຊີວະປະຫວັດເປັນເຜົ້າ 3 ໜ້າ (ກາແດງ ແລະ ບໍ່ເກີນ 3 ເດືອນ)
   - ຮູບຖ່າຍ 3x4 ຈຳນວນ **04** ໃບ (ບໍ່ເກີນ 3 ເດືອນ).
   - ສຳເນົາບັດປະຈຳຕົວ ແລະ ສຳມະໂນຄົວ.
   - ສຳເນົາໃບປະກາດວິຊາສະເພາະ ແລະ ຄະແນນ.
   - ຄ່າທຳນຽມໃນການສະໝັກ ຈຳນວນ 10.000 ກີບ.
   - ສຳເນົາໃບປະກາດ ມໍ ປາຍ.
   - ໃບກວດສຸຂະພາບ (ກາແດງ ແລະ ບໍ່ເກີນ 6 ເດືອນ).
   - ໃບຢັ້ງຢືນຄ້ຳປະກັນ (ກາແດງ ແລະ ບໍ່ເກີນ 3 ເດືອນ).
   - ໃບແຈ້ງໂທດ (ກາແດງ ແລະ ບໍ່ເກີນ 3 ເດືອນ).
   - ໃບຢັ້ງຢືນທີ່ຢູ່ (ກາແດງ ແລະ ບໍ່ເກີນ 3 ເດືອນ).
4) ນັກສອບເສັງທຸກທ່ານຕ້ອງເອົາໃຈໃສ່ປະກອບເອກະສານໃຫ້ຄົບຖ້ວນຕາມ ແລະ ຖືກຕາມເງື່ອນໄຂ ທີ່ທະນາຄານ ໄດ້ລະບຸໄວ້ດ້ານເທິງ.
5) **ຜູ້ສະໝັກຕ້ອງມາຍື່ນເອກະສານສະໝັກວຽກດ້ວຍຕົນເອງ ໂດຍໃຫ້ຖືໃບປະກາດວິຊາສະເພາະ ແລະ ໃບຄະແນນສະບັບຕົ້ນມານຳ. ບໍ່ອະນຸຍາດໃຫ້ບຸກຄົນອື່ນມາຍື່ນເອກະສານສະໝັກວຽກແທນ.**
6) ພາຍຫຼັງສຳເລັດປະກອບຟອມສະໝັກງານ ແລະ ເອກະສານຄົບຖ້ວນ ທ່ານສາມາດນຳສົ່ງເອກະສານໄດ້ທີ່ **ພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່ ຕຶກ C, ຊັ້ນ 4** ໃນໂມງລັດຖະການ 08:30 – 15:30 ໂມງ. ນັບແຕ່ ***ວັນທີ 31/05/2017 ຫາ 30/06/2017***

**ໝາຍເຫດ: ທຄຕລ ຈະບໍ່ພິຈາລະນາຟອມສະໝັກທີ່ບໍ່ຄົບເງື່ອນໄຂ ຫຼື ເອກະສານບໍ່ຄົບຕາມທີ່ໄດ້ປະກາດ.**

ນະຄອນຫຼວງວຽງຈັນ, ວັນທີ 30/05/2017

ຮ. ຫົວໜ້າພະແນກຈັດຕັ້ງ-ພະນັກງານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ພະແນກ ຈັດຕັ້ງແລະພະນັກງານ

ນ. ບົວໄພວັນ ນັນທາວົງ